ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------

ນາຍົກລັດຖະມົນຕີ

ເລກທີ...63...../ນຍ

ນະຄອນຫຼວງວຽງຈັນ, ວັນທີ:..13...11..2015

# ຄຳສັ່ງ
# ຂອງນາຍົກລັດຖະມົນຕີ
# ວ່າດ້ວຍການຕອບໂຕ້ການລະບາດພະຍາດໂປລີໂອ ແລະ ສົ່ງເສີມການຢອດຢາ - ສັກຢາກັນພະຍາດ

- ອີງໃສ່ ໜັງສືສະເໜີຂອງ ທ່ານ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ສະບັບເລກທີ 1877/ສທ, ລົງວັນທີ 30 ຕຸລາ 2015, ກ່ຽວກັບການຕອບໂຕ້ການລະບາດພະຍາດໂປລີໂອ ແລະ ສົ່ງເສີມການຢອດຢາ - ສັກຢາກັນພະຍາດ.

ເພື່ອສະກັດກັ້ນການແຜ່ລາມຂອງການລະບາດພະຍາດໂປລີໂອ ແລະ ເຮັດໃຫ້ຂະບວນການຢອດຢາ - ສັກຢາກັນພະຍາດທີ່ຈະຈັດຂຶ້ນທັງໝົດ 3 ຮອບ ໃຫ້ແຕ່ລະບ້ານໃນຂອບເຂດທົ່ວປະເທດບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ໃຫ້ ທ່ານເຈົ້າຄອງນະຄອນຫຼວງ, ບັນດາເຈົ້າແຂວງ, ບັນດາກະຊວງຂະແໜງການທີ່ກ່ຽວຂ້ອງ, ຄະນະກຳມາທິການເພື່ອແມ່ ແລະ ເດັກທຸກຂັ້ນ, ແນວໂຮມ, ຊາວໜຸ່ມ, ແມ່ຍິງ ແລະ ນາຍບ້ານແຕ່ລະບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ແລະ ພາກສ່ວນຕ່າງໆ ຈົ່ງໄດ້ເອົາໃຈໃສ່ຄືດັ່ງລຸ່ມນີ້:

ກ) ເປັນເຈົ້າການໃນການຈັດຕັ້ງປະຕິບັດວັນຢອດຢາ - ສັກຢາກັນພະຍາດແຫ່ງຊາດ ໃຫ້ບັນລຸຕາມຄາດໝາຍ 100%. ໂດຍການມອບວຽກລະອຽດໃຫ້ແຕ່ລະພາກສ່ວນຮັບຜິດຊອບຕາມພາລະບົດບາດ ໜ້າທີ່ຂອງຕົນ.

ຂ) ອຳນວຍຄວາມສະດວກໃຫ້ທີມແພດໝໍ ທີ່ໄປເຄື່ອນໄຫວຢອດຢາ - ສັກຢາກັນພະຍາດຢູ່ຂັ້ນບ້ານ ໂດຍສະເພາະເຂດຫ່າງໄກສອກຫຼີກ ພ້ອມທັງຊ່ວຍປຸກລະດົມພໍ່ແມ່ປະຊາຊົນຜູ້ປົກຄອງເດັກທີ່ທຳການຜະລິດຢູ່ໄຮ່, ນາ, ສວນ ໃຫ້ນຳເອົາລູກຫຼານຂອງຕົນມາບ້ານເພື່ອຮັບວັກຊີນກັນພະຍາດໂປລີໂອ ຕາມວັນ, ເວລາທີ່ນັດໝາຍ.

ຄ) ມອບໃຫ້ຂະແໜງສຶກສາທິການ ແລະ ກິລາ ເປັນເຈົ້າການ ໃນການຂຶ້ນບັນຊີເດັກນັກຮຽນໃນເກນອາຍຸເປົ້າໝາຍ 15 ປີລົງມາ, ສົ່ງໃຫ້ທີມຢອດຢາ - ສັກຢາກັນພະຍາດ.

ງ) ໃຫ້ແຕ່ລະພາກສ່ວນ ເອົາໃຈໃສ່ໂຄສະນາ ສຸຂະສຶກສາໃຫ້ປະຊາຊົນຢ່າງເປັນປົກກະຕິ ເພື່ອໃຫ້ປະຊາຊົນເຂົ້າໃຈ ແລະ ເຂົ້າຮ່ວມຂະບວນການຢອດຢາ - ສັກຢາກັນພະຍາດ. ຖ້າຫາກມີທ້ອງຖິ່ນໃດຍັງມີປະຊາຊົນບໍ່ທັນໃຫ້ການຮ່ວມມືໃຫ້ອຳນາດການປົກຄອງເປັນເຈົ້າການສຶກສາອົບຮົມ ຫຼື ປະຕິບັດມາດຕະການຖ້າຫາກຈຳເປັນ.

ຈ) ໃຫ້ອົງການປົກຄອງຂັ້ນແຂວງ, ຂັ້ນເມືອງຈົ່ງປະກອບສ່ວນໃນການຂົນສົ່ງວັກຊີນ ແລະ ອຸປະກອນທີ່ຈຳເປັນໂດຍສະເພາະແມ່ນການສົ່ງໄປທ້ອງຖິ່ນຫ່າງໄກສອກຫຼີກ ແລະ ທຸລະກັນດານ, ຖ້າຫາກມີຄວາມຈຳເປັນດ້ານງົບປະມານບໍ່ພຽງພໍ ໃຫ້ຄົ້ນຄວ້າປະກອບສ່ວນ.

2. ໃຫ້ຂະແໜງສາທາລະນະສຸກທຸກຂັ້ນ ຈັດຕັ້ງທີມແພດໝໍ, ສ້າງແຜນການເຄື່ອນໄຫວປະຈຳວັນ, ຈັດຫາງົບປະມານ ແລະ ວັກຊີນໃຫ້ພຽງພໍ ແລະ ພົວພັນປະສານງານນຳອົງການປົກຄອງແຕ່ລະຂັ້ນໃຫ້ໜັກແໜ້ນ. ໃນແຕ່ລະວັນຕ້ອງລາຍງານຜົນຂອງການຈັດຕັ້ງປະຕິບັດການຢອດຢາ - ສັກຢາກັນພະຍາດ ໃຫ້ຂັ້ນເທິງຂອງຕົນ, ຖ້າພົບພໍ້ກັບຄວາມຫຍຸ້ງຍາກ ໃຫ້ລາຍງານອົງການປົກຄອງຂອງຕົນດ່ວນ ເພື່ອຫາທິດທາງແກ້ໄຂໃຫ້ທັນເວລາ.

3. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮ້ອນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຕາມໜ້າທີ່ຂອງຕົນຢ່າງເຂັ້ມງວດ ແລະ ມີຄວາມຮັບຜິດຊອບສູງ.

4. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ